**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 18 ເມສາ 2010 (04 -18 -2010)**

---

**<u>ມີສິ່ງກະຕຸ້ນໃຈອັນຖືກຕ້ອງ:</u>**

**<u>ຂໍ້ພຣະຄັມພີໃນບົດຮຽນ</u>:** (2 ໂກຣິນໂທ 5:9-21)

**<u>ເປົ້າໝາຍຂອງບົດຮຽນ:</u>**

ບົດຮຽນນີ້ເວົ້າສະເພາະເຖິງເຫດຜົນຂອງຜູ້ເຊື່ອເຂົ້າປະກອບສ່ວນໃນການປະຕິບັດຮັບໃຊ້.

**<u>ຄວາມສຳຄັນຂອງບົດຮຽນ:</u>**

ບົດຮຽນນີ້ຈະຊ່ອຍກະຕຸ້ນຈິດໃຈຂອງທ່ານໃຫ້ເຂົ້າປະກອບສ່ວນໃນການປະຕິບັດຮັບໃຊ້

**<u>ຜົນສະທ້ອນຕໍ່ຊີວິດ:</u>**

ເປັນສິ່ງຄຳຄັນຕ້ອງເຂົ້າໃຈຄືບໍ່ແມ່ນໃຫ້ສະມາຊິກໃນໂບດເຂົ້າປະກອບສ່ວນໃນການປະຕິບັດຮັບໃຊ້ເທົ່ານັ້ນ, ສະມາຊິກຕ້ອງເຂົ້າໃຈດີກັບສິ່ງທີ່ເຂົາປະກອບສ່ວນນຳນັ້ນມີເຫດຜົນອັນໃດ. ບົດຮຽນນີ້ໄດ້ເຕືອນສະມາຊິກໃຫ້ເຂົ້າໃຈເຖິງເຫດຜົນທີ່ພວກເຂົາເຈົ້າເຂົ້າປະກອບສ່ວນໃນການປະຕິບັດຮັບໃຊ້ນັ້ນ ການທີ່ເຂົ້າປະກອບສ່ວນກັບພັນທະກິດຂອງພຣະເຈົ້ານັ້ນມີກຽດເພາະພຣະເຈົ້າເປີດໂອກາດໃຫ້ກາຍເປັນຜູ້ຮ່ວມງານກັບສິ່ງພຣະເຈົ້າກະທຳຕໍ່ໂລກ.

**<u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ……..
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**<u>ແນະນຳ:</u>**

- ບົດຮຽນໃນມື້ນີ້ໄດ້ເນັ້ນໜັກໃສ່ການມີແຮງດົນໃຈທີ່ຖືກຕ້ອງໃນການຮັບໃຊ້
- ໃນປີ 2007 ທາງ ທົ່ນທາງແຫ່ງຊີວິດໄດ້ຊອກ ແລະປະເມີນເບິ່ງຜູ້ໃຫຍ່ຄົນອະເມຣິກາຜູ້ທີ່ໄດ້ໄປໂບດໂປຣແຕັສຕັງເດືອນລະຄັ້ງມີຢູ່ພຽງ 37%.
- ການສຳຣວດເບິ່ງຈຸດເປົ້າໝາຍຂອງຊີວິດນັ້ນ ເປັນຫຍັງຈຶ່ງວ່າເປັນການສຳຄັນສຳລັບບັນດາຜູ້ທີ່ເຊື່ອ?
- ເປັນຫຍັງພວກເຮົາຈຶ່ງມີຈຸດມຸ້ງໝາຍຂອງຊີວິດ?

**1. <u>ເພາະຍ້ອນການເອົາໃຈໃສ່ຂອງພວກເຮົາ:</u>** (2 ໂກຣິນໂທ 5:7-11ກ)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 2 ໂກຣິນໂທ 5:7-11ກ
- ເຖິງແມ່ນວ່າພວກເຮົາຢູ່ ຫລືບໍ່ຢູ່ກັບພຣະຜູ້ເປັນເຈົ້າ ແຕ່ເປັນຫຍັງແຮງດຶງດູດໃນການຮັບໃຊ້ຈຶ່ງບໍ່ໄດ້ປ່ຽນແປງໄປ?
- ພຣະຄໍາໄດ້ຊ່ອຍພວກເຮົາໃນການພິຈາຣະນາຮື່ນຕອງເຖິງເປົ້າໝາຍຂອງພວກເຮົາ.
- ຈົ່ງອະທິບາຍເຖິງຄວາມແຕກຕ່າງຂອງທີ່ນັ່ງໃນການພິພາກສາ. ຊຶ່ງຄວາມລອດພົ້ນເປັນຂອງຂວັນທີ່ປະທານໃຫ້ລ້າໆ, ແຕ່ບ່ອນນັ່ງເພື່ອຕັດສິນນັ້ນເປັນບ່ອນສະທ້ອນກັບຄືນຫາຊີວິດການຮັບໃຊ້ຂອງຜູ້ທີ່ເຊື່ອທັງຫລາຍ.
- ຖາມວ່າ: ສະຖານທີ່ ທີ່ໃຊ້ເພື່ອພິພາກສາ ຕັດສິນນັ້ນໄດ້ຊ່ອຍໃຫ້ຜູ້ທີ່ເຊື່ອເອົາໃຈຈົດຈໍ່ໃສ່ແນວໃດ?
- ຕາມພຣະທັມໄດ້ສະແດງອອກວ່າມະນຸດຈະໄດ້ຮັບຕາມການກະທໍາຂອງຕົນ, ຜູ້ທີ່ເຊື່ອມີເຫດຜົນຍ້ອນການເອົາໃຈໃສ່ຕໍ່ອັນໃດແດ່? ການທີ່ຮູ້ຈັກວ່າຈະໄດ້ສິ່ງຕອບແທນໃນສວັນມີຄວາມດຶງດູດໃຈຂອງຜູ້ທີ່ເຊື່ອໃຫ້ຮັບໃຊ້ແນວໃດ?

**<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (2 ໂກຣິນໂທ 5:7-11ກ)

- ແມ່ນຫຍັງເປັນເປົ້າໝາຍຂອງຜູ້ທີ່ເຊື່ອທັງຫລາຍ? ບັນລັງພິພາກສາໄດ້ມີຄວາມຈັບໃຈຂອງຜູ້ທີ່ເຊື່ອຢ່າງໃດ?
- ຄວາມຢໍາເກງອົງພຣະຜູ້ເປັນເຈົ້າໄດ້ຊັກຈູງຜູ້ທີ່ເຊື່ອແນວໃດ?
- ການທີ່ຮູ້ຈັກພຣະເຈົ້າດີທີ່ສຸດນັ້ນມີຄວາມໝາຍແນວໃດແດ່?
- ການທີ່ທ່ານຮູ້ວ່າພຣະເຈົ້າໄດ້ຊົງຮູ້ຈັກທ່ານນັ້ນມີຄວາມສໍາຄັນແນວໃດສໍາລັບທ່ານ?
- ການຊອກສແວງຫາຂອງທ່ານໂປໂລໄດ້ຈູງໃຈມະນຸດໃຫ້ຮັບໃຊ້ ຫລືປະກາດຂ່າວປະເສີດຂອງພຣະຄຣິດບໍ່?

**2.<u>ເພາະດ້ວຍຄວາມຮັກຂອງພຣະຄຣິດ:</u>** (2 ໂກຣິນໂທ 5:11ຂ-15)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 2 ໂກຣິນໂທ 5:11ຂ-15
- ຂໍໃຫ້ນັກຮຽນສໍາຣວດເບິ່ງການດໍາຣົງຊີວິດຂອງເຂົາເຈົ້າວ່າ ສິ່ງນີ້ເປັນຄວາມຈິງສໍາລັບເຂົາເຈົ້າບໍ່.
- ໃນຂໍ້ທີ 13 ຊຶ່ງເປັນການສະທ້ອນເຖິງ. ໃນການເວົ້າຢ່າງແບບຄົນເສັຽຈິດກໍເພາະເຫັນແກ່ພຣະເຈົ້າ ແລະເວົ້າຢ່າງຄົນປົກກະຕິ ກໍເຫັນແກ່ຊາວໂກຣິນໂທນັ້ນ ໝາຍຄວາມວ່າແນວໃດ? ທ່ານໂປໂລໄດ້ໃຊ້ຂໍ້ຄວາມເຫລົ່ານີ້ເພື່ອໂຕ້ແຍ້ງພວກຄຣູສອນປອມໃນເມືອງໂກຣິນໂທ.
- ການອ້າງເຫດຜົນນີ້ມາໃຫ້ຜູ້ທີ່ເຊື່ອທີ່ມີການໂຕ້ແຍ້ງ ແລະມີຄວາມຄິດອອກນອກລູ່ນອກທາງ.
- ທ່ານໂປໂລໂຕ້ແຍ້ງດ້ວຍຄວາມເຕັມໃຈຂອງລາວເພື່ອສະແດງໃຫ້ເຫັນແຮງຈູງໃຈຂອງລາວແນວໃດແດ່?
- ພຣະຄຣິດມີຄວາມຮັກຕໍ່ຜູ້ທີ່ເຊື່ອໃຫ້ມີອິດທິພົນແນວໃດ?
- ໃຫ້ອະທິບາຍຄໍາວ່າ “ບັງຄັບ”ຊຶ່ງມີຄວາມໝາຍວ່າ ໃຫ້ຢູ່ໃຕ້ບັງຄັບ.

**<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (2 ໂກຣິນໂທ 5:11ຂ-15)

1. ແມ່ນຫຍັງທີ່ເປັນຄຸນຄ່າຂອງການຊອກຫາແກ່ນສານຫົວໃຈ ແລະບໍ່ແມ່ນເປັນທີ່ສະແດງອອກ?
2. ເປັນຫຍັງຄົນທັງຫລາຍຈຶ່ງຄຶດວ່າໂປໂລເປັນຄົນເສັຽສະຕິ?
3. ພຣະເຢຊູຄຣິດຮັກອິດທິພົນທີ່ໂປໂລໃຊ້ໄດ້ຢ່າງໃດ?
4. ເປັນເພາະເຫດໃດພຣະເຢຊູຄຣິດຈຶ່ງສິ້ນພຣະຊົນເພື່ອທຸກຄົນ?

5. ເປັນຫຍັງພຣະຄຣິດຈຶ່ງຕາຍສຳລັບຜູ້ທີ່ໃຊ້ກຳລັງທັງໝົດໃຫ້ມີຊີວິດຢູ່ເພື່ອອິນອື່ນໂດຍທີ່ບໍ່ແມ່ນເຂົາເອງ?
6. ເຂົາໄດ້ປະຕິເສດການຕາຍຂອງພຣະຄຣິດແນວໃດ?

3 . **ເພາະດ້ວຍພຣະປະສົງຂອງພຣະເຈົ້າ:** (2 ໂກຣິນໂທ 5:16-21)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 2 ໂກຣິນໂທ 5:16-21
- ຢ່າໃຫ້ຜູ້ນຶ່ງຜູ້ໃດຈ້ອງມອງ ແລະຕັ້ງເປົ້າໝາຍໃສ່ທາງຝ່າຍເນື້ອໜັງ ນັ້ນໝາຍຄວາມວ່າແນວໃດ?
- ການຖືກສ້າງຂຶ້ນໃໝ່ແຕກຕ່າງກັນກັບການເຮັດໃຫ້ແຂງແຮງຂຶ້ນໃໝ່ ຫລື ສຶກສາຄືນໃໝ່ແນວໃດ?
- ການຖືກສ້າງຂຶ້ນໃໝ່ໄດ້ກ່ຽວຂ້ອງກັບເຂົາເຈົ້າເອງບໍ່ ເຊັ່ນທາກໍ່ພົ້ນຈາກເປັນຄົນບາບ?
- ພຣະປະສົງຂອງພຣະເຈົ້ານັ້ນແມ່ນເປັນຜູ້ທີ່ໃຫ້ເຂົາທັງຫລາຍເຂົ້າສນິດຢູ່ໃນພຣະຄຣິດ, ບໍ່ແມ່ນເປັນຜູ້ທີ່ເຂົາເຄີຍເປັນມາກ່ອນ.
- ແມ່ນຫຍັງທີ່ພຣະເຈົ້າຊົງມີພຣະປະສົງສຳລັບຜູ້ທີ່ເຊື່ອແຕ່ລະຄົນ?
- ພຣະເຈົ້າຊົງໃຫ້ພວກເຮົາຄືນດີກັບພຣະອົງໂດຍການຊຳຣະລ້າງຄວາມຜິດບາບໃຫ້ພວກເຮົາ ໃຫ້ພວກເຮົາກາຍມາເປັນຜູ້ຮັບໃຊ້ຂອງການຄືນດີແນວໃດ?
- ໜ້າທີ່ບາງສິ່ງບາງຢ່າງການຕອບສນອງຂອງນັກການທູດນັ້ນມີຫຍັງແດ່?
- ນັກການທູດຈະມີປະສິດທິພາບບໍ່ ຖ້າເຂົາບໍ່ຮູ້ວ່າເຂົາແມ່ນໃຜ ເຂົາເປັນຜູ້ຕາງໜ້າໃຜ ຫລືບໍ່ຮູ້ຈະເຮັດຫຍັງ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** 2 ໂກຣິນໂທ 5:16-21

1. ເປົ້າໝາຍຂອງທາງຝ່າຍເນື້ອໜັງ ຫລືທາງຝ່າຍໂລກນັ້ນຄືແນວໃດ?
2. ແມ່ນຫຍັງຄືການຄືນດີ? ຖ້າຜູ້ໃດຜູ້ນຶ່ງຢູ່ຫ່າງຈາກການຊ່ອຍເຫລືອໃຫ້ກັບຄືນດີແລ້ວຈະເປັນແນວໃດ?
3. ທູດຂອງພຣະຄຣິດນັ້ນແມ່ນຜູ້ໃດ?
4. ພຣະຄຣິດສະເດັດລົງມາຮັບໂທດຄວາມຜິດບາບແທນພວກເຮົາແນວໃດ? ແລະເປັນດ້ວຍເຫດໃດ?

**ພຣະຄັມພີແຫ່ງຄວາມຈິງ**

- ພວກເຮົາຕ້ອງປະເມີນເບິ່ງເປົ້າໝາຍແຫ່ງຊີວິດຂອງພວກເຮົາໃນການຄາດຫວັງຂອງການປາກົດຕົວຕໍ່ໜ້າບັນລັງພິພາກສາຂອງພຣະຄຣິດ ແລະເຮັດໃຫ້ເປັນທີ່ພໍພຣະທັຍຂອງພຣະອົງ.
- ຄວາມຮັກຂອງພຣະຄຣິດເປັນຄວາມຮັກທີ່ຍິ່ງໃຫຍ່ທີ່ສຸດ ຊຶ່ງພຣະອົງຊົງສຳແດງໃຫ້ພວກເຮົາເຫັນໃນການຕາຍຂອງພຣພອົງສຳລັບພວກເຮົາ ຂໍໃຫ້ພວກເຮົາຊອຍຊັກຈູງຊ່ອຍເຫລືອຊຶ່ງກັນແລະກັນ.
- ໃນເມື່ອພຣະເຈົ້າໄດ້ຊົງໃຫ້ພວກເຮົາຄືນດີກັບພຣະອົງໂດຍຜ່ານທາງພຣະຄຣິດ, ພວກເຮົາຕ້ອງຊື່ນຊົມຍິນດີໃນພຣະອົງ ໂດຍການນຳເອົາການຄືນດີໄປສູ່ຄົນອື່ນໆດ້ວຍ.
- ພຣະຄຣິດມີລາງວັນໃຫ້ພວກເຮົາທີ່ເປັນທູດນຳເອົາຂ່າວສານຂອງພຣະອົງອອກໄປປະຕິບັດພາຍໃຕ້ການຄຸ້ມຄອງ ແລະອຳນາດຂອງພຣະອົງ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**